ກະຊວງການເງິນ

# ກົມຄຸ້ມຄອງຊັບສິນຂອງລັດ
# ຫ້ອງການຈົດທະບຽນການຄ້ຳປະກັນດ້ວຍສັງຫາລິມະຊັບຂອງ ສປປ ລາວ
# "ຫ້ອງການຈົດທະບຽນ"

## <u>ແຈ້ງການກ່ຽວການນຳໃຊ້ຂໍ້ມູນສ່ວນຕົວ</u>

ພວກຂ້າພະເຈົ້າພຽງແຕ່ນຳໃຊ້ຂໍ້ມູນສ່ວນຕົວນີ້ເພື່ອຈຸດປະສົງທີ່ກ່ຽວຂ້ອງໂດຍກົງກັບຫນ້າທີ່ ຫຼື ກິດຈະກຳຂອງ ພວກຂ້າພະເຈົ້າໃນການຈົດທະບຽນຄ້ຳປະກັນ.

ພວກຂ້າພະເຈົ້າບໍ່ໄດ້ໃຫ້ຂໍ້ມູນສ່ວນຕົວຂອງບຸກຄົນກັບອົງການຈັດຕັ້ງຂອງລັດຖະບານອື່ນໆ, ອົງການຈັດຕັ້ງພາກເອກະຊົນ ຫຼື ບຸກຄົນອື່ນໆ ນອກຈາກໍລະນີໃດໜຶ່ງທີ່ກຳນົດໃວ້ດັ່ງລຸ່ມນີ້:

- ບຸກຄົນດັ່ງກ່າວນັ້ນຍິນຍອມໃຫ້ຂໍ້ມູນ
- ບຸກຄົນດັ່ງກ່າວນັ້ນຄາດຫວັງ, ຫຼື ໄດ້ຖືກແຈ້ງວ່າປະເພດຂອງຂໍ້ມູນດັ່ງກ່າວ ຕາມປົກກະຕິແລ້ວຈະຕ້ອງແຈ້ງຫາບຸກຄົນ ຫຼື ອົງການຈັດຕັ້ງອື່ນໆ.
- ຖ້າບໍ່ດັ່ງນັ້ນ, ຈຳເປັນຕ້ອງໄດ້ຮັບອະນຸຍາດຕາມກົດຫມາຍ
- ທັ້ງນີ້ເພື່ອເປັນການປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ຮ້າຍແຮງຕໍ່ກັບຊີວິດ ຫຼື ສຸຂະພາບຂອງບຸກຄົນ, ຫຼື
- ດ້ວຍເຫດຜົນທີ່ຈຳເປັນສຳລັບການບັງຄັບໃຊ້ກົດຫມາຍຂອງຄະດີອາຍາ ຫຼື ກົດຫມາຍວ່າດ້ວຍ ການບັງຄັບໃຊ້ການລົງໂທດດ້ວຍການປັບໄໝ ຫຼື ສຳລັບການປົກປ້ອງຊັບສິນຂອງປະຊາຊົນ.

### ຄວາມປອດໄພຂອງຂໍ້ມູນ

ພວກຂ້າພະເຈົ້າຮັບຜິດຊອບໃນການປົກປ້ອງຂໍ້ມູນສ່ວນຕົວນີ້ທີ່ສາມາດສົ່ງຜົນຕໍ່ການສູນເສຍ, ໂດຍສະເພາະແມ່ນການເຂົ້າເຖິງຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ, ການນຳໃຊ້, ດັດແກ້ ຫຼື ເປີດເຜີຍ, ແລະ ສະກັດກັ້ນການນຳໃຊ້ຂໍ້ມູນໃນທາງທີ່ບໍ່ຖືກຕ້ອງ ອື່ນໆ.

ເມື່ອຂໍ້ມູນສ່ວນຂອງບຸກຄົນທີ່ພວກຂ້າພະເຈົ້າໄດ້ເກັບກຳມານັ້ນມີບໍ່ຊັດເຈນອີກຕໍ່ໄປແລ້ວ, ພວກຂ້າພະເຈົ້າຈະທຳລາຍ ຫຼື ລົບລ້າງເພື່ອຄວາມປອດໄພ ແລະ ສອດຄ່ອງກັບນະໂຍບາຍ ການບັນທຶກຂໍ້ມູນຂອງກະຊວງການເງິນ.